**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຄົມມະນາຄົມ ຂົນສົ່ງ ເລກທີ...3416.../ຄຂປກ

ໄປສະນີ ແລະ ກໍ່ສ້າງ. ວັນທີ...04..SEP..2002

# ຂໍ້ກຳນົດ

# ກ່ຽວກັບ ລະບຽບການ

## ໃນການຄຸ້ມຄອງ ແລະ ການສອບເສັງໃບຂັບຂີ່ ຍານພາຫະນະຂົນສົ່ງທາງບົກ

- ອີງໃສ່ກົດໝາຍວ່າດ້ວຍການຂົນສົ່ງທາງບົກ;
- ອີງໃສ່ກົດຫມາຍວ່າດ້ວຍການຈະລາຈອນທາງບົກ;
- ອີງໃສ່ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ່ 66/ນຍ ລົງວັນທີ່ 20 ພຶດສະພາ 1999 ວ່າດ້ວຍ ການຈັດຕັ້ງ ແລະເຄື່ອນໄຫວ ຂອງກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ;
- ອີງຕາມການສະເໜີຂອງກົມຂົນສົ່ງສະບັບເລກທີ່313/ກຂສ, ລົງວັນທີ່22 ເມສາ 2002.

**ລັດຖະມົນຕີວ່າການກະຊວງຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງ ອອກຂໍ້ກຳນົດ:**

## ໝວດທີ່ I

## ຂໍ້ກຳນົດ ທົ່ວໄປ

**ມາດຕາ 1: ຈຸດປະສົງ:**

ຂໍ້ກຳນົດສະບັບນີ້ ວາງລະບຽບການໃນການຄຸ້ມຄອງ ແລະ ການສອບເສັງໃບຂັບຂີ່ ຍານພາຫະນະຂົນສົ່ງທາງບົກໃຫ້ມີປະສິດທິພາບ ແລະມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

**ມາດຕາ 2: ນິຍາມຄຳສັບ:**

- ການຂັບຂີ່ແມ່ນການຄວບຄຸມ ຫລື ບັນຊາຍານພາຫະນະໄປຕາມເສັ້ນທາງ.
- ຜູ້ຂັບຂີ່ແມ່ນຄົນຜູ້ທີ່ຄວບຄຸມ ຫຼື ບັນຊາຍານພາຫະນະໄປຕາມເສັ້ນທາງ.
- ຍານພາຫະນະເຖິງຍານພາຫະນະທີ່ຮັບໃຊ້ການຂົນສົ່ງທາງບົກ.
- ໃບຂັບຂີ່ແມ່ນໃບຢັ້ງຢືນຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ ຊຶ່ງອອກໃຫ້ແກ່ຜູ້ຂັບຂີ່ຍານພາຫະນະ ທີ່ແລ່ນ ດ້ວຍເຄື່ອງຈັກ ທີ່ຜ່ານການສອບເສັງໄດ້ຕາມລະບຽບການ.

**ມາດຕາ 3: ການຈັດແບ່ງປະເພດໃບຂັບຂີ່:**

**ໃບຂັບຂີ່ໄດ້ແບ່ງອອກເປັນ 8 ປະເພດຊຶ່ງແຕ່ລະປະເພດ ມີຄວາມຫມາຍດັ່ງນີ້:**

❖ (A) ອະນຸຍາດໃຫ້ຂັບຂີ່ຍານພາຫະນະປະເພດສອງລໍ້ ທີ່ຕິດເຄື່ອງຈັກທຸກຂະໜາດ;

- ❖ (A1) ອະນຸຍາດໃຫ້ຂັບຂີ່ຍານພາຫະນະປະເພດສາມລໍ້ ທີ່ຕິດເຄື່ອງຈັກທຸກຂະໜາດ ສຳລັບບັນທຸກສິ່ງຂອງແຕ່ບໍ່ອະນຸຍາດໃຫ້ຂົນສົ່ງຄົນໂດຍສານ;
- ❖ (A2) ອະນຸຍາດໃຫ້ຂັບຂີ່ຍານພາຫະນະປະເພດລົດຕ໊ອກໆ ແລະລົດໄຖນາເດີນຕາມທີ່ແກ່ລໍ້;
- ❖ (B) ອະນຸຍາດໃຫ້ຂັບຂີ່ຍານພາຫະນະປະເພດລົດເບົາ 4 ລໍ້ທີ່ມີນ້ຳໜັກລວມບໍ່ເກີນ 3.500 ກິໂລກຼາມ;
- ❖ (C) ອະນຸຍາດໃຫ້ຂັບຂີ່ຍານພາຫະນະປະເພດ ລົດຂົນສົ່ງສິນຄ້າ ແຕ່ 4 ລໍ້ຂຶ້ນໄປ ແລະມີນ້ຳໜັກລວມເກີນ 3.500 ກິໂລກຼາມ ຂຶ້ນໄປ. ໃບຂັບຂີ່ປະເພດ(C) ສາມາດນຳໃຊ້ແທນ ປະເພດ (B) ໄດ້;
- ❖ (D) ອະນຸຍາດໃຫ້ຂັບຂີ່ ຍານພາຫະນະ ປະເພດລົດຂົນສົ່ງໂດຍສານ ແຕ່ 4 ລໍ້ຂຶ້ນໄປ;
- ❖ (D1) ອະນຸຍາດໃຫ້ຂັບຂີ່ ຍານພາຫະນະປະເພດລົດສາມລໍ້ຕິດເຄື່ອງຈັກຂົນສົ່ງໂດຍສານ;
- ❖ (E) ອະນຸຍາດໃຫ້ຂັບຂີ່ຍານພາຫະນະ ປະເພດ B,C,D ຕິດພວງທີ່ມີນ້ຳໜັກແຕ່ 750ກິໂລກຼາມຂຶ້ນໄປ;

## ໝວດທີ່ II
## ປະເພດໃບຂັບຂີ່ ແລະການນຳໃຊ້

### ມາດຕາ 4: ໃບຂັບຂີ່ຂອງພົນລະເຮືອນ.

ໃບຂັບຂີ່ ຂອງພົນລະເຮືອນ ອອກໃຫ້ບັນດາບຸກຄົນຕາມກໍລະນີຕ່າງໆດັ່ງຕໍ່ໄປນີ້:

**1- ຜ່ານການສອບເສັງໄດ້:**

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະຄົນຕ່າງປະເທດທີ່ອາໄສຢູ່ ສປປ ລາວ ລ້ວນແຕ່ສາມາດຮ້ອງຂໍສອບເສັງເອົາໃບຂັບຂີ່ຂອງພົນລະເຮືອນ ຕາມທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ ເລກII. ຊຶ່ງເມື່ອໄດ້ຜ່ານການສອບເສັງໄດ້ຕາມລະບຽບການທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ ເລກ III ກໍ່ຈະໄດ້ຮັບໃບຂັບຂີ່ ດັ່ງກ່າວ.

**2- ການຂໍປ່ຽນຈາກ ໃບຂັບຂີ່ ຂອງຕ່າງປະເທດ:**

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດທີ່ອາໄສຢູ່ ສປປ ລາວ ທີ່ມີໃບຂັບຂີ່ ຂອງຕ່າງປະເທດ ຕ້ອງໄດ້ຂໍປ່ຽນເອົາໃບຂັບຂີ່ ຂອງພົນລະເຮືອນລາວຕາມລະບຽບການທີ່ກຳນົດໄວ້ ຢູ່ໃນ ເອກະສານຊ້ອນທ້າຍເລກ I ຂອງ ຂໍ້ກຳນົດສະບັບນີ້.

**3- ການຂໍປ່ຽນຈາກໃບຂັບຂີ່ສາກົນ.**

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດທີ່ອາໃສຢູ່ສປປ ລາວ ທີ່ມີໃບຂັບຂີ່ສາກົນຈາກຕ່າງປະເທດ ກໍ່ມີສິດຮ້ອງຂໍເອົາໃບຂັບຂີ່ຂອງພົນລະເຮືອນໄດ້ໂດຍຕ້ອງປະຕິບັດຕາມລະບຽບການທີ່ໄດ້ກຳນົດໄວ້ຢູ່ໃນ ເອກະສານຊ້ອນທ້າຍ ເລກ I ຂອງຂໍ້ກຳນົດ ສະບັບນີ້.

**4- ການຂໍປ່ຽນຈາກໃບຂັບຂີ່ ຂອງກອງທັບ.**

ທະຫານ, ພະນັກງານ, ລັດຖະກອນ ສັງກັດຢູ່ໃນກຳລັງປ້ອງກັນຊາດ ທີ່ມີໃບຂັບຂີ່ ຂອງກອງທັບກໍມີສິດຮ້ອງຂໍ ປ່ຽນເອົາໃບຂັບຂີ່ ພົນລະເຮືອນ ຕາມປະເພດທີໄດ້ກຳນົດໄວ້ໃນໃບ

ຂັບຂີ່ຂອງຕົນນັ້ນ ໂດຍຕ້ອງປະຕິບັດຕາມ ລະບຽບການທີ່ໄດ້ກຳນົດໄວ້ ຢູ່ໃນເອກະສານຊ້ອນທ້າຍເລກ Iຂອງຂໍ້ກຳນົດສະບັບນີ້.

**ມາດຕາ 5: ການນຳໃຊ້ໃບຂັບຂີ່ຂອງພົນລະເຮືອນ.**

ໃບຂັບຂີ່ຂອງພົນລະເຮືອນທີ່ອອກໃຫ້ບຸກຄົນຢ່າງຖືກຕ້ອງຕາມລະບຽບການຊຶ່ງຈະແມ່ນອອກຢູ່ພະແນກ ຄຂປກ ແຂວງ, ກຳແພງນະຄອນ ຫຼື ເຂດພິເສດໃດກໍ່ຕາມແມ່ນສາມາດນຳໃຊ້ໃນການຂັບຂີ່ໄດ້ໃນຂອບເຂດທົ່ວປະເທດ.

ໃບຂັບຂີ່ຂອງພົນລະເຮືອນ ມີອາຍຸການນຳໃຊ້ 5 ປີ ນັບແຕ່ວັນທີ່ໄດ້ອອກໃຫ້ເປັນຕົ້ນໄປ. ກ່ອນຈະໝົດອາຍຸການນຳໃຊ້ຢ່າງນ້ອຍໜຶ່ງເດືອນເຈົ້າຂອງໃບຂັບຂີ່ນັ້ນ ຕ້ອງໄດ້ກວດສຸຂະພາບຄືນໃໝ່ ແລ້ວນຳເອົາໃບກວດສຸຂະພາບ ແລະ ໃບຂັບຂີ່ໄປແຈ້ງຕໍ່ກອງຄຸ້ມຄອງພາຫະນະແລະການຂັບຂີ່ ຂອງແຂວງ, ກຳແພງນະຄອນ ຫລືເຂດພິເສດ ທີ່ຕົນອາໄສຢູ່ເພື່ອ ຂໍຕໍ່ອາຍຸການນຳໃຊ້ແລະ ປ່ຽນເອົາໃບໃໝ່.

**ມາດຕາ 6: ໃບຂັບຂີ່ ຂອງຕ່າງປະເທດ.**

ໃບຂັບຂີ່ ຂອງຕ່າງປະເທດ ແມ່ນໃບຢັ້ງຢືນການຂັບຂີ່ ທີ່ອອກໂດຍອົງການ ທີ່ມີສິດອຳນາດກ່ຽວຂ້ອງ ຂອງຕ່າງປະເທດໃດໜຶ່ງ.

**ມາດຕາ 7: ການຂໍປ່ຽນ ແລະການນຳໃຊ້ໃບຂັບຂີ່ຂອງຕ່າງປະເທດ.**

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດທີ່ອາໄສຢູ່ສປປ ລາວ ທີ່ເຄີຍໄດ້ດຳລົງຊີວິດຢູ່ຕ່າງປະເທດ ເຊັ່ນ: ໄປປະຕິບັດວຽກງານ, ໄປສຶກສາຮ່ຳຮຽນ ຫຼືໄປປະກອບກິດຈະການຢູ່ຕ່າງປະເທດເປັນເວລານານ ອາດຈະໄດ້ໃບຂັບຂີ່ຂອງປະເທດທີ່ຕົນໄດ້ໄປຢູ່ນັ້ນ ຕາມລະບຽບການຂອງປະເທດດັ່ງກ່າວ. ເມື່ອກັບຄືນມາ ສປປ ລາວ ໃບຂັບຂີ່ດັ່ງກ່າວແມ່ນ ບໍ່ສາມາດນຳໃຊ້ໄດ້ອີກ ແລະ ຕ້ອງໄດ້ຂໍປ່ຽນເອົາໃບຂັບຂີ່ຂອງພົນລະເຮືອນລາວ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ2 ຂອງ ມາດຕາ 4 ຂ້າງເທິງນີ້.

ຄົນຕ່າງປະເທດ ທີ່ມີໃບຂັບຂີ່ຂອງປະເທດຕົນທີ່ຍັງມີອາຍຸການນຳໃຊ້ ຢູ່ນັ້ນຕ້ອງໄດ້ສະເໜີຂໍໃບຢັ້ງຢືນການນຳໃຊ້ ໃບຂັບຂີ່ຕາມລະບຽບການທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍເລກ Iຂອງຂໍ້ກຳນົດສະບັບນີ້.

**ມາດຕາ 8:ໃບຂັບຂີ່ສາກົນ.**

ໃບຂັບຂີ່ສາກົນ ມີ ສອງປະເພດຄື:

1- ໃບຂັບຂີ່ສາກົນຂອງ ສປປ ລາວ ທີ່ອອກໂດຍກົມຂົນສົ່ງຂອງ ສປປ ລາວ ໃຫ້ແກ່ບຸກຄົນທີ່ມີໃບຂັບຂີ່ຂອງພົນລະເຮືອນລາວ ຢ່າງຖືກຕ້ອງເພື່ອນຳໃຊ້ຢູ່ຕ່າງປະເທດ.

2- ໃບຂັບຂີ່ສາກົນຂອງຕ່າງປະເທດ ທີ່ອອກໃຫ້ໂດຍອົງການທີ່ມີສິດອຳນາດຂອງຕ່າງປະເທດໃດໜຶ່ງ.

**ມາດຕາ 9: ການນຳໃຊ້ໃບຂັບຂີ່ສາກົນ.**

ໃບຂັບຂີ່ສາກົນຂອງ ສປປ ລາວ ແມ່ນອອກໃຫ້ແກ່ບັນດາບຸກຄົນ ທີ່ມີໃບຂັບຂີ່ຂອງພົນລະເຮືອນລາວມາແລ້ວຢ່າງໜ້ອຍໜຶ່ງປີ ແລະ ບໍ່ເຄີຍກໍ່ໃຫ້ເກີດອຸປະຕິເຫດ ຫຼືກະທໍາຜິດກົດລະບຽບການຈະລາຈອນໃນສະຖານໜັກເຊັ່ນບັນດາ ບຸກຄົນດັ່ງຕໍ່ໄປນີ້:

1- ພະນັກງານຂອງລັດທີ່ຖືກແຕ່ງຕັ້ງໄປປະຕິບັດໜ້າທີ່ຫຼືໄປສຶກສາຮໍ່າຮຽນ ຫຼືນັກຮຽນນັກສຶກສາທີ່ໄປສຶກສາຮໍ່າຮຽນໄລຍະຍາວຢູ່ຕ່າງປະເທດ;

2- ພົນລະເມືອງລາວທົ່ວໄປ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະຄົນຕ່າງປະເທດທີ່ອາໄສຢູ່ສປປ ລາວ ທີ່ໄດ້ຮັບ ອະນຸຍາດເດີນທາງໄປປະຕິບັດທຸລະກິດຕ່າງໆ ຢູ່ຕ່າງປະເທດເປັນເວລາຍາວນານພໍສົມຄວນ.

ໃບຂັບຂີ່ສາກົນ ຂອງ ສປປ ລາວມີອາຍຸການນໍາໃຊ້ 12 ເດືອນ ກ່ອນຈະໝົດກໍານົດຢ່າງນ້ອຍ 30 ວັນ ຕ້ອງນໍາໃບຂັບຂີ່ ດັ່ງກ່າວມາຂໍຕໍ່ອາຍຸການນໍາໃຊ້ຄືນໃໝ່ຕໍ່ກົມຂົນສົ່ງກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ.

ສໍາລັບໃບຂັບຂີ່ສາກົນ ຂອງຕ່າງປະເທດ ທີ່ຖືໂດຍຄົນຕ່າງປະເທດນັ້ນສາມາດນໍາໃຊ້ໄດ້ຢູ່ສປປ ລາວ ຕາມອາຍຸການຂອງໃບຂັບຂີ່. ໃນກໍລະນີຢາກສືບຕໍ່ນໍາໃຊ້ພາຍຫລັງທີ່ໃບຂັບຂີ່ດັ່ງກ່າວໝົດອາຍຸນັ້ນ ຕ້ອງໄດ້ປະຕິບັດຕາມລະບຽບທີ່ໄດ້ກໍານົດໄວ້ໃນເອກະສານຊ້ອນທ້າຍເລກ I ຂອງຂໍ້ກໍານົດສະບັບນີ້.

**ມາດຕາ 10:ໃບຂັບຂີ່ຂອງກອງທັບ.**

ໃບຂັບຂີ່ຂອງກອງທັບແມ່ນອອກໂດຍກົມ, ກອງ ຫຼື ໜ່ວຍງານຂອງກະຊວງປ້ອງກັນປະເທດທີ່ມີສິດ ແລະ ໜ້າທີ່ ໃນການອອກໃບຂັບຂີ່ດັ່ງກ່າວໃຫ້ແກ່ທະຫານ, ພະນັກງານ, ລັດຖະກອນ ຂອງ ກໍາລັງປ້ອງກັນຊາດ.

**ມາດຕາ 11: ການນໍາໃຊ້ໃບຂັບຂີ່ຂອງກອງທັບ.**

ໃບຂັບຂີ່ ຂອງກອງທັບ ແມ່ນອະນຸຍາດໃຫ້ນໍາໃຊ້ໄດ້ສະເພາະ ແຕ່ສໍາລັບການຂັບຂີ່ຍານພາຫະນະຮັບໃຊ້ວຽກ ງານປ້ອງກັນຊາດໂດຍກົງທີ່ຂື້ນ ແລະຕິດປ້າຍທະບຽນ "ກທ" ເທົ່ານັ້ນ. ບໍ່ອະນຸຍາດໃຫ້ນໍາໃຊ້ ສໍາລັບການຂັບຂີ່ຍານ ພາຫະນະທີ່ຂື້ນ ແລະຕິດປ້າຍທະບຽນຂອງພົນລະເຮືອນທຸກປະເພດ.

**ມາດຕາ 12:ການເຮັດໃບຂັບຂີ່ເສຍຫາຍ.**

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະຄົນຕ່າງປະເທດທີ່ອາໄສຢູ່ ສປປ ລາວ ຫາກໄດ້ເຮັດໃບຂັບຂີ່ຊະນິດຕ່າງໆ ຂອງຕົນເສຍຫາຍ ຄື: ໃບຂັບຂີ່ຂອງພົນລະເຮືອນ, ໃບຂັບຂີ່ຂອງຕ່າງປະເທດ ຫຼືໃບຂັບຂີ່ສາກົນ ຈະຕ້ອງໄດ້ແຈ້ງການເສຍຫາຍ ຕາມລະບຽບການທີ່ໄດ້ກໍານົດໄວ້ຢູ່ໃນເອກະສານຊ້ອນທ້າຍເລກ Iຂອງຂໍ້ກໍານົດສະບັບນີ້ຈິ່ງຈະ ໄດ້ຮັບການພິຈາລະນາຈາກອົງການທີ່ກ່ຽວຂ້ອງ ອອກໃບຂັບຂີ່ໃບໃໝ່ໃຫ້.

## ໝວດ ທີ III
## ການຄຸ້ມຄອງ ແລະການອອກໃບຂັບຂີ່

**ມາດຕາ 13: ອົງການຄຸ້ມຄອງ ແລະອອກໃບຂັບຂີ່.**

ອົງການຄຸ້ມຄອງ ແລະອອກໃບຂັບຂີ່ ປະກອບດ້ວຍ:

1- ກົມຂົນສົ່ງ;

2- ພະແນກ ຄຂປກ ແຂວງ, ກຳແພງນະຄອນ ແລະ ເຂດພິເສດ;

**ມາດຕາ 14:ສິດ ແລະໜ້າທີ່ຂອງກົມຂົນສົ່ງ.**

ໃນການຄຸ້ມຄອງ ແລະ ການອອກໃບຂັບຂີ່ກົມຂົນສົ່ງມີສິດ ແລະໜ້າທີ່ຕົ້ນຕໍດັ່ງນີ້:

1. ຮັບຮອງເອົາຄະນະກຳມະການສອບເສັງໃບຂັບຂີ່ ຕາມການສະເໜີຂອງພະແນກ ຄຂປກ ແຂວງ, ກຳແພງນະຄອນ ແລະ ເຂດພິເສດ;
2. ຄຸ້ມຄອງ, ກວດກາການສອບເສັງ, ພ້ອມທັງຄຸ້ມຄອງ ແລະ ກວດກາໃບຂັບຂີ່ໃນຂອບເຂດທົ່ວປະເທດ;
3. ອອກໃບຂັບຂີ່ຂອງພົນລະເຮືອນ ສະບັບຖາວອນ;
4. ອອກໃບຂັບຂີ່ສາກົນ ຂອງ ສປປ ລາວໃຫ້ແກ່ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະຄົນຕ່າງປະເທດທີ່ອາໄສຢູ່ສປປລາວ ຜູ້ທີ່ມີໃບຂັບຂີ່ຂອງພົນລະເຮືອນລາວມາກ່ອນແລ້ວ ເພື່ອນຳໄປໃຊ້ຢູ່ຕ່າງປະເທດ;
5. ກວດກາ ແລະ ອອກໃບຢັ້ງຢືນການປ່ຽນໃບຂັບຂີ່ຂອງຕ່າງປະເທດ ແລະໃບຂັບຂີ່ສາກົນຂອງ ຕ່າງປະເທດ ເປັນໃບຂັບຂີ່ຂອງພົນລະເຮືອນລາວໃຫ້ແກ່ພົນລະເມືອງລາວ, ຄົນຕ່າງດ້າວ ແລະຄົນບໍ່ມີສັນຊາດທີ່ອາໄສຢູ່ ສປປ ລາວ;
6. ກວດກາ ແລະ ອອກໃບຢັ້ງຢືນການປ່ຽນໃບຂັບຂີ່ຂອງກອງທັບເປັນໃບຂັບຂີ່ຂອງພົນລະເຮືອນໃຫ້ແກ່ທະ ຫານ, ພະນັກງານ ແລະ ລັດຖະກອນ ຂອງກຳລັງປ້ອງກັນຊາດ;
7. ອອກໃບອະນຸຍາດ ຫຼືໃບຢັ້ງຢືນການນຳໃຊ້ໃບຂັບຂີ່ຂອງຕ່າງປະເທດ ແລະໃບຂັບຂີ່ສາກົນຂອງຕ່າງປະເທດ ໃຫ້ແກ່ຄົນຕ່າງປະເທດເພື່ອນຳໃຊ້ຢູ່ສປປ ລາວ;
8. ອອກໃບຂັບຂີ່ສາກົນ ຂອງ ສປປ ລາວ ແລະໃບຢັ້ງຢືນການນຳໃຊ້ໃບຂັບຂີ່ສາກົນຂອງຕ່າງປະເທດ ຫລື ໃບຂັບຂີ່ຕ່າງປະເທດ ສະບັບໃໝ່ປ່ຽນແທນສະບັບເກົ່າທີ່ເສຍຫາຍໃຫ້ແກ່ຄົນຕ່າງປະເທດ ຊຶ່ງໄດ້ແຈ້ງການເສຍຫາຍ ຕາມລະບຽບການແລ້ວ;
9. ຈັດຕັ້ງການຝຶກອົບຮົມ ທາງດ້ານວິຊາການໃຫ້ແກ່ພະນັກງານວິຊາການ ຄຸ້ມຄອງພາຫະນະ ແລະ ການຂັບຂີ່ຂອງ ພະແນກ ຄຂປກ ປະຈຳແຂວງ, ກຳແພງນະຄອນ, ເຂດພິເສດ ແລະ ນັກວິຊາການຂອງບັນດາໂຮງຮຽນ ສອນຂັບຂີ່ລົດຢ່າງເປັນປະຈຳ ແລະຕໍ່ເນື່ອງ;
10. ອອກບົດແນະນຳເພີ່ມເຕີມກ່ຽວກັບການຈັດຕັ້ງປະຕິບັດຂໍ້ກຳນົດ ສະບັບນີ້.

**ມາດຕາ 15:ສິດ ແລະໜ້າທີ່ຂອງພະແນກຄົມມະນາຄົມຂົນສົ່ງໄປສະນີ ແລະກໍ່ສ້າງ ປະຈຳແຂວງ, ກຳແພງນະຄອນແລະ ເຂດພິເສດ.**

ໃນການຄຸ້ມຄອງ ແລະອອກໃບຂັບຂີ່ພະແນກຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

1. ປະກອບຄະນະກຳມະການສອບເສັງໃບຂັບຂີ່ນຳສະເໜີຕໍ່ກົມຂົນສົ່ງກະຊວງ ຄຂປກ ເພື່ອຮັບຮອງເອົາແລ້ວ ຈຶ່ງນຳສະເໜີເຈົ້າແຂວງ, ເຈົ້າຄອງກຳແພງນະຄອນ ຫລືຫົວໜ້າເຂດພິເສດອະນຸມັດ ແຕ່ງຕັ້ງ ຢ່າງເປັນທາງການ;
2. ຄຸ້ມຄອງ, ກວດກາການສອບເສັງແລະການອອກໃບຂັບຂີ່ ຢູ່ພາຍໃນທ້ອງຖິ່ນ ຂອງຕົນ ຕາມລະບຽບການທີ່ກະຊວງ ຄຂປກ ວາງອອກ;
3. ຊີ້ນຳກອງຄຸ້ມຄອງພາຫະນະ ແລະການຂັບຂີ່ໃນການກວດກາຄຳຮ້ອງຂໍສອບເສັງ ຫຼື ປ່ຽນໃບຂັບຂີ່, ໃນການ ຈັດຕັ້ງການສອບເສັງໃບຂັບຂີ່ໃຫ້ແກ່ຜູ້ທີ່ມີພູມລຳເນົາຫຼືປະກອບອາຊີບ ຢູ່ພາຍໃນທ້ອງຖິ່ນຂອງຕົນ;
4. ອອກໃບຂັບຂີ່ຊົ່ວຄາວ ກຳນົດ 6 ເດືອນ ໃຫ້ແກ່ຜູ້ສອບເສັງໄດ້ ຫລື ປ່ຽນໃບຂັບຂີ່ພ້ອມທັງສົ່ງຂໍ້ມູນ ຂອງຜູ້ທີ່ໄດ້ຮັບໃບຂັບຂີ່ຊົ່ວຄາວນັ້ນໃຫ້ກົມຂົນສົ່ງເພື່ອອອກເປັນໃບຂັບຂີ່ສະບັບຖາວອນ;
5. ອອກໃບຂັບຂີ່ຊົ່ວຄາວ ກຳນົດ 6 ເດືອນໃຫ້ແກ່ຜູ້ທີ່ເຮັດໃບຂັບຂີ່ພົນລະເຮືອນລາວເສຍຫາຍ ຊຶ່ງໄດ້ແຈ້ງການເສຍຫາຍຕາມລະບຽບການແລ້ວ ຫລືຂໍຕໍ່ອາຍຸນຳໃຊ້;
6. ຄຸ້ມຄອງ, ຕິດຕາມ, ກວດກາການສິດສອນຂອງບັນດາໂຮງຮຽນສອນຂັບລົດທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
7. ຈັດຕັ້ງການຝຶກອົບຮົມທາງດ້ານທິດສະດີແລະດ້ານການປະຕິບັດຕົວຈິງ ພາກບຳລຸງໄລຍະສັ້ນ ໃຫ້ແກ່ຜູ້ທີ່ຂັບລົດເປັນແລ້ວ ແລະພາກຝຶກອົບຮົມປົກກະຕິ ຫລືໄລຍະຍາວໃຫ້ແກ່ຜູ້ທີ່ຂັບລົດບໍ່ທັນເປັນ ຕາມຫລັກສູດທີ່ທາງ ກະຊວງຄົມມະນາຄົມ ຂົນສົ່ງໄປສະນີ ແລະກໍ່ສ້າງໄດ້ກຳນົດໄວ້ພ້ອມທັງອອກໃບຢັ້ງຢືນໃຫ້ແກ່ຜູ້ທີ່ຜ່ານການຝຶກອົບຮົມ ທິດສະດີຕາມຫລັກສູດນັ້ນ ເພື່ອນຳໄປປະກອບສຳນວນເອກະສານຄຳຮ້ອງຂໍສອບເສັງເອົາໃບຂັບຂີ່, ຫາກວ່າແຂວງ, ກຳແພງນະຄອນ ຫລືເຂດພິເສດ ຂອງຕົນຍັງບໍ່ທັນມີໂຮງຮຽນສອນຂັບລົດໂດຍຄິດໄລ່ເອົາ ຄ່າບໍລິການຕ່າງໆ ໃນການຝຶກອົບຮົມ ດັ່ງກ່າວຕາມຄວາມເໝາະສົມ.

## ໝວດທີ່ IV
## ຂໍ້ກຳນົດ ສຸດທ້າຍ

**ມາດຕາ 16: ການຈັດຕັ້ງປະຕິບັດ.**

ມອບໃຫ້ກົມຂົນສົ່ງສົມທົບ ກັບທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຂໍ້ກຳນົດສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 17: ຜົນບັງຄັບໃຊ້.**

ຂໍ້ກຳນົດສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ລະບຽບການສະບັບເລກທີ່ 2217/ຄຂປກ ລົງວັນທີ່ 17/9/1993 ກ່ຽວກັບການຄຸ້ມຄອງ ແລະ ສອບເສັງໃບຂັບຂີ່ຍານພາຫະນະຂົນສົ່ງທາງບົກ. ບັນດາຂໍ້ກຳນົດ, ກົດລະບຽບ ຫຼື ລະບຽບການ ທີ່ຂັດກັບຂໍ້ກຳນົດ ສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີ ວ່າການ

ບົວທອງ ວົງລໍຄຳ